


*ຫວ່າງສາມປີກ່ອນພຸ້ນ...*

*ຂ້ອຍຫຼົບມາແຕ່ໄປຕັດໄມ້ມາເຮັດງອນໄຖ....*

*ຮອດເຮືອນກໍຄໍ່າເຕີບ ຟ້າມືດມາຄັບທິບ ທໍາທ່າຄືຝົນຈິຕົກ...*

" ກະດີ ! ໃຫ້ມັນຕົກລັ່ງ ໆ ແຕ່ຫົວປີແນວນີ້ແຫລະ ມັນຈັ່ງໄດ້ກ້າແຕ່ຫົວປີ ແລະ ກໍບໍ່ຕ້ອງດໍານາຫຼ້າ "

ຂ້ອຍຄຶດຕາມພາສາຮາສດອນຊາວນາ ຊຶ່ງມີຫນ້າທີ່ຖ້າປ່ອນບັດຜູ້ແທນ ສີ່ປີຕໍ່ເທື່ອ ເພື່ອໃຫ້ເພິ່ນມີເຮືອນງາມໆຢູ່ ໄດ້ມີຣົຖຫຼວງຂີ່ ໄດ້ມີ... ໂອ໊ຍ ! ສາຣະພັດເພິ່ນມີ ແລ້ວເພິ່ນກໍລືມເຮົາ

ວ່າອັນທີ່ແທ້ແລ້ວ ຖ້າວ່າໄດ້ກ້າໃນສອງສາມມື້ເມື່ອຫນ້ານີ້ ກະບໍ່ແມ່ນຫົວປີປານໃດດອກ ເອົາບຸນບັ້ງໄຟ ຕັ້ງແຕ່ທິດແລ້ວພຸ້ນ ດຽວນີ້ກະຟາດເຂົ້າເກືອບເດືອນຫົກດັບແລ້ວ

ພວກຜູ່ເຖົ້າບູຮານ (ຂ້ອຍຍັງບໍ່ທັນເຖົ້າປານໃດ ລູກສາວກົກຂ້ອຍພວມນັ້ນກໍຫາແຕ່ສິບເຈັດປີຊິເຂົ້າ) ເພິ່ນວ່າປີນີ້ປ້ານຝົນບໍ່ດີຮາວໃດ ເຫດຜົນກະມີຢູ່ວ່າ " ຈູດບັ້ງໄຟແລ້ວ ມື້ຄໍ່າຝົນບໍ່ຕົກລ້າງຄ້າງ "

ກະຈັກວ່າຄ້າງບັ້ງໄຟເປື້ອນກັບຝົນເດືອນຫົກ ມັນກ່ຽວກັນບ່ອນໃດກໍບໍ່ຮູ້ ຈັ່ງວ່າຄັນຝົນບໍ່ລ້າງຄ້າງ ແລ້ວຝົນຊິບໍ່ດີ ບໍ່ເລັ່ງ

ປີກາຍນີ້ ຢູ່ບ້ານເຮົາກະຄືວ່າບໍ່ໄດ້ເອົາບຸນບັ້ງໄຟ ຜີຫ່າຝົນທາງໃດຄືວ່າດີອຸບາດ ຖ້ວມເປັນທະເລ ຂາວຈ່ານ ຜ່ານບໍ່ມີເຫຼືອ ບໍ່ຈັກນາລຸ່ມນາເທິງ ນາພໍ່ຕູ້ຜູ່ເພິ່ນວ່າ ຝົນລ້າງຄ້າງ ຝົນຈັ່ງດີຫັ້ນ ຊ້ຳແຮງຖ້ວມຄັກ ໄດ້ທຽວເມືອວຽງ ໄປຂໍເງິນລູກເຂີຍລູກສາວ ມາຊື້ເຂົ້າສານວັບໆ ບໍ່ເຫັນວ່າໄດ້ເຮັດບັ້ງໄຟ

ມື້ນັ້ນມືດຊຸ້ມລ້າວ ຂ້ອຍຈັ່ງເຖິງເຮືອນ

ແມ່ເຂົາ

ບໍ່ຈັກວ່ານ້ຳຫູນ້ຳຕາ ຜອງຫນ້າຫົວຄືວງໍ

ຣາຍງານເຫດການສູ່ຂ້ອຍຟັງວ່າ

"ອີ່ແດງໂຕນນຳອ້າຍບ່າວ"

"ປັດໂທ້ !"

ຂ້ອຍຕົບເອິກຜາງ

"ກູວ່າແລ້ວຕວ່າ ພໍພິນລົບຂຶ້ນມາມັນຫາກຕ່າງໂລດນ່າ.....ພຸ້ນກໍຊູ້ພີ້ກໍຊູ້ຫາຜູ່ຊິຍູ້....!"

ພໍປາກລົ້ມທາງປືນ

ລູກນໍລູກ !

ພໍ່ອິດສາລ້ຽງເກືອເຝືອມ່າມ ຊີ້ນຕ່ອນຫນາປາຕ່ອນໃຫຍ່....

ລ້ຽງລູກເນາະ ບໍ່ມີວ່າຊິໃຫ້ນ້ອຍຫນ້າຕໍ່າຕາ ບ້ານເມືອງເພິ່ນໄດ້ປາກກະໃຫ້ປາກ ບ້ານເມືອງເພິ່ນ ໄດ້ກິນກະໃຫ້ກິນ.

ກະໂຄດ ແຕ່....ມັນບ້ານເມືອງນີ້ແຫຼະພາເປັນ

ເຮືອນເຫນືອກະໂຕນ ເຮືອນໃຕ້ກະໂຕນ...ໂຕນນໍາອ້າຍບ່າວ

ເປັນນໍາເປີງບ້ານ.... ເປັນຕາມຄະເຍີມຄືວ່າຫັ້ນແຫຼະ

ບໍ່ໂຕນກໍເປັນເມັ່ງນ້ອຍເຂົາ

ຄຶດຮອດບ່ອນຊິໄປຊອກນໍາຫາອີ່ແດງ....

ຕັ້ນປີກ ມີດແປດດ້ານເອົາໂລດ

ບໍ່ຈັກວ່າຊິໄປນໍາມັນຢູ່ໃສ ?

ຢູ່ໃນເມືອງກະບໍ່ມີອີ່ພີ່ອີ່ນ້ອງ

ຄັນວ່າໄປຫາຕໍາຣວດເຈົ້ານາຍເຫາະ

ກໍຄ້ານຫມອບ ໆ ຄານ ໆ

ຕາມຊ່າງຫົວມັນ

ມັນມັກເຂົາໃຫ້ມັນໄປ...ໄປດີມີສຸກພໍ່ບໍ່ວ່າ ເຫາະແນມລ້ຽງເກືອກັນໃຫ້ມັນກຸ້ມມັນຫຼ້ອນ

ອຸກຢູ່ແຕ່ວ່າດໍານາປີນີ້ ຊິບໍ່ມີຜູ້ຊ່ອຍແຮງແມ່ມັນທໍ່ນັ້ນແຫຼະ

ອີ່ແດງເອີຍ ມຶງກະດາຍ !

ກໍຫາໄດ້ຊ່ອຍມາເຕັມໄມ້ເຕັມມືປີດຽວ ພໍໄດ້ເບົາແຮງຍ້ອນ ກະຊ່າງວ່າໄປແລ່ນນຳເຂົາ

ສູມັກມານທານຮ້າຍກັນເປັນຫຍັງບໍ່ບອກພໍ່ ?

*"ປຸກເຮືອນຕາມໃຈຜູ່ຢູ່ - ຜູກອູ່ຕາມໃຈຜູ່ນອນ"*

ພໍ່ກໍຮູ້ຢູ່ ເຄີຍເວົ້າໃສ່ຫູເລື້ອຍ ໆ ຢູ່

ຄຶດຫຼາຍກໍພໍຮາວນັ້ນ

ຄຶດນຳຄົນຫນີກະສໍ່າຄຶດນຳຄົນຕາຍບໍ່ຜິດ

ມົວຄຶດມົວຫ່ວງຫຼາຍກະເສັຽການ

ຝົນກະມາແລ້ວ ໃກ້ຍາມນາເຂົ້າມາແລ້ວ

ເດືອນຫົກກໍຮອມແຕ່ມື້ຫມົດ

*ເອີ້ !*

*ເວົ້າພື້ນຝົນເດືອນຫົກ*

ກະລືວ່າແມ່ນບັກນັ້ນມັນມາຕົວະໃຫ້ລູກສາວຂ້ອຍໂຕນນຳ ?

ບັກ ແມ່ນຫຍັງກະລືມຊື່ມັນຊໍ້າແລ້ວລະ

ມັນເຮັດການນຳພວກເຮັດທາງຫັ້ນກໍ !

ຕອນມາຕັ້ງທັບຢູ່ຫົວບ້ານ ມັນກັບຫມູ່ອີກສອງສາມຄົນ ມາຜູກເຂົ້າເດືອນກິນຢູ່ເຮືອນຫນ້າສາວຮອງ...

ກະນ້ອງແມ່ເຂົາອີແດງຫມູ່ນີ້ແຫຼະ

ລາງມື້ຫນ້າສາວຮອງເມືອວຽງເມືອນາ ກະໃຫ້ອີ່ແດງໄປແຕ່ງຄວາມກິນໃຫ້ພວກເຮັດການທາງ

ບັກອັນວ່າຫນີ້....

ເກີດເປັນມື້ວ່າແຕ່ແລ້ວວຽກ

ແມ່ນທາງວ່າຮ້ອງຕາຍມັນແຕ່ເພງ *ຝົນເດືອນຫົກ* ຫາມັນນັ້ນເອົາໂລດ...ຫຽວຮ້ອງຫຽວກ່ອມ ພໍປານວ່າມັນຊິບໍ່ຮູ້ເປີດຮູ້ເບື່ອເປັນ

*ອີ່ແດງວ່າຊັ້ນ*

*ຄັນແມ່ນໄດ້ຍິນເພງນີ້ ໃຫ້ວ່າຫູຕັ້ງທີ່ລີ້ຄັກປານຫຼັງ...*

*ຫຼືວ່າແມ່ນອີ່ແດງໂຕນນໍາບັກອັນນີ້ ?*

ຂ້ອຍກະຄຶດສົງໃສປູ່ຫຼາຍມື້ເຕີບ

ສືບຖາມຫມູ່ຄູ່ຫຸ່ນຮາວຄາວດຽວມັນ ເຂົາກະວ່າມັນສິມັກ ໆ ກັນປູ່ແດ່ຕວ່າລະ

ມື້ບຸນປູ່ວັດມີລໍາວົງ....

ບັກອັນນັ້ນເຫມົາຮອບຍາມໃດ

ບໍ່ພົ້ນອີ່ແດງຂ້ອຍຖືພວງມາລັຍກາງເວທີ

"ຮອບນີ້ຄນະຊາຍພະເນຈອນນອນປ່ຽວໃຫ້ກຽດມາອຸດຫນຸນ ຂໍເຊີນນາງສາວແດງ... ອອກມາຖືພວງ ມາລັຍຄອຍຖ້າຫົວຫນ້າຄນະປູ່ກາງເວທີ ຂໍເຊີນ....ອ້າວນ້ອງສາວແດງກ້າວອອກມາແລ້ວ ກອງເຊັ່ງຕົບມືເປັນ ກຽດ ແຊັ່ງ ໆ ໆ !!!

*ເພິ່ນວ່າ.... ທ້າວໂຄສົກກໍດີ !*

ຕໍ່ໄປຄາວນີ້ງກໍເສບເພງ

24/VII ຫ້າມຈຳໜ່າຍ

"ຮອບນີ້ຄົນຂະຫຍາຍໃນເພງ *ຝົນເດືອນຫົກ*

*ເທື່ອໃດເທື່ອນັ້ນ*

ວ່າແຕ່ແມ່ນບັກອັນນັ້ນເຫມືອນຮອບ

ແມ່ນທາງວ່າ *ຝົນເດືອນຫົກ* ເອົາໂລດ....

ຈັ່ງໃດກະຕ້ອງແມ່ນມັນນີ້ແຫຼະມາຕົວະເອົາອີ່ແດງຂ້ອຍໄປ

ວ່າແລ້ວຂ້ອຍກະຍັງຈື່ຫນ້າຈຳຕາມັນໄດ້ຢູ່

ກະຜູ່ຈົບຜູ່ງາມພໍໄປວັດໄປວາແຫ້ລະບໍມັນກະດາຍ

ອີ່ແດງຂ້ອຍກໍຫນ້າພໍຕາ ສາລາພໍແວ່

ເທາະແນມວ່າເຂົາໄດ້ກັນກະຄືຊິສົມມາພາຄວນຢູ່ດອກ

ແລ້ວເປັນຫຍັງວ່າບໍ່ມີ່ສູ່ຂໍ ?

ຫຼືວ່າອີ່ຫ່າແດງດີ້ນຕາຍນຳຝົນເດືອນຫົກ ເດືອນຫ່າທີ້ມມັນນັ້ນ...?

ບາດແລ້ວເດືອນເຈັດເດືອນແປດ ມີໃຜດຳນາຊ່ອຍແມ່ອີ່ແດງຂ້ອຍ ?

ກາງຕໍ່ບັກເສີກລູກຜູ່ຖ້ວນສອງ ກະເສີກສົມຊື່....

ຮຽນຫນັງສືພໍໄດ້ແຕ່ປື້ມ

ຈົບໄປບວດຮຽນຂຽນອ່ານນຳຫົວພໍ່ຢູ່ວັດ ກະຊ້ຳລັກສິກໄປເຂົ້າທະຫານແຕ່ຍາມໃດບໍ່ຮູ້

ເອົາບຸນວາສນາເທາະເປັ ລູກຜູ່ຊາຍ

ຫຼືວ່າຊິນອາສາມັນຊິຂື້ນທາງນີ້ກະບໍ່ຮູ້ດອກ

ແນວວ່າບຸນກັມທຳແຕ່ງນຳ

ເຮົາແຕ່ງເອົາເອງບໍ່ເປັນ

ເວົ້າຮອດອີ່ແດງ ຂ້ອຍໄດ້ຍິນເພງ *ຝົນເດືອນຫົກ* ຍາມໃດແມ່ນທາງແລ່ນໄປອັດວິທະຍຸເອົາໂລດ

ມັນເຄືອງຫູ ເຈັບໃຈບໍ່ຮູ້ເຊົາ

ມາຮອດມື້ວານນີ້....

ແດງ ! ຄຳລູກພໍ່ !

ກະປຽວວ່າໄປດີມີສຸກ

ບາດໃດແທ້ລະແມ່ນມາເປັນແນວນີ້

*ເສັຽຫາຍຫມົດເອົາຊື່ ໆ*

ວິຊາປາ ກິນແນວອື່ນມີບໍ່ອຶດບໍ່ປາກ

ເຮັດໃດລູກພໍ່ມາວ່າຈັ່ງຊີ້ ?

ນາເຮົາກະມີ

ໄຮ່ເຮົາກະມີ

ເຂົາຖິ້ມເຂົາປະເປັນຫຽັງວ່າບໍ່ຄືນມາຍ້າວມາເຮືອນ ?

*ເສັຽຫມົດເອົາຊື່ ໆ ລູກສາວຂ້ອຍ*

ຂ້ອຍກະບໍ່ຄຶດດອກວ່າຊິໄດ້ມາພໍ້ອີ່ແດງ !

ຂ້ອຍກະມາວຽກຂອງຂ້ອຍຕ່າງຫາກ

ມາຫວງເງິນນຳຈ່າດອນ

ແຕ່ກີ້ເພິ່ນເປັນຕຳຣວດຢູ່ບ້ານ ແລ້ວລະຍ້າຍມາຢູ່ທາດຫຼວງ

ເຫັນບ້ານເມືອງເພິ່ນຫຸ້ມກັນເຕັມກະເລີຍໄປສ່ອງເບິ່ງ

ວ່າເພິ່ນເບິ່ງຫຽັງກັນ

ຂ້ອຍກະບໍ່ເຄີຍເຫັນຈັກເທື່ອ ມີແຕ່ແມ່ຍິງເຕັມຫ້ອງແຄບ ໆ ນັ້ນອັດຍັດເອົາໂລດ

*ອີ່ແດງກະປົນຢູ່ນຳຫມູ່*

ທຳອິດຂ້ອຍເກືອບຈື່ໜ້າມັນບໍ່ໄດ້

*ມັນດັດຜົມສັ້ນ - ນຸ່ງໂສ້ງຂາບານ - ແຕ້ມປາກແຕ້ມຄິ້ວພໍປານເມັງອະເມຣິກາ*

ມັນທ້ວງຂ້ອຍກ່ອນ ກະຈັ່ງວ່າຈື່ມັນໄດ້

ດູຕົນສົມເພດລູກ ຈົນຈິດວິ່ໃຈວອນ

ຫຼົບອອກມາຖາມຈ່າດອນວ່າເພິ່ນຈັບພວກອີ່ແດງມາ ມັນເປັນໂທດເປັນຜິດເຣື່ອງຫຽັງ ?

ຈ່າດອນບອກວ່າ

*" ແມ່ຈ້າງເຖື່ອນ ໄປຈັບມາມື້ຄືນນີ້ "*

*ເອີກກູແຕກສາຍແຫຼກກູຂາດ !*

*" ອີ່ແດງກູເປັນແມ່ຈ້າງ "*

*ເຊື້ອແນວບໍ່ເຄີຍມີ*

*ຊໍ້າຍັງວ່າເປັນແມ່ຈ້າງເຖື່ອນອີກ !*

*ເສັງຄັກ ໆ ຕວ່າລູກສາວຂ້ອຍ*

ຈຳເປັນຈຳໄປ ອ້ອນວອນນິບໄຫວ້ ຈ່າດອນໃຫ້ລາວຊ່ອຍປະກັນມັນອອກມາໃຫ້

ກະບຸນບາບ

ຄັນເຮົາເພິ່ງພາອາສັຍກັນ ບາບບໍ່ເຫັນເວນບໍ່ຕ້ອງ

ເຖິງຄາວຕົກອັບຈົນຕາແຈມາກໍຫາກມີເສັ້ນຄ້ຳ ສາຍແນນຄາດໄດ້ຮອມ

ຈ່າດອນຊ່ອຍເປັນວຽກເປັນການ ກະຈັ່ງວ່າ *ໄດ້ອີ່ແດງ ອອກມາຢູ່ປ້າວຢູ່ເຮືອນ ຊົ່ວດີກະລູກໂຕ ເຮັດແນວໃດໄດ້ ເທາະດາເພິ່ນໃສ່ກັນເຮົາແລ້ວເດ້ !*

ຫນີ້ຈ່າດອນກະເລີຍຍົກໃຫ້ລາວບໍ່ທວງເອົາຊ້ຳສາຫຍານດອກ !

ຢູ່ບ້ານຢູ່ເຮືອນມຸ ໆ ສິ ໆ

ກະດຽວວ່າມັນຊິປ່ຽນຫມົກປ່ຽນໃຈໃຫມ່ຕີຊັ້ນດອກ

ຕັ້ງທີ່ແທ້ບໍ່ພົສິບມື້

*ເຂົາວ່າມັນລັກໄປຫາເງິນຢູ່ບ່ອນເກົ່າແຖ*

*ແນວວ່າຄົນມັນເສັງພໍເຮງແລ້ວເນາະ ?*

*ເອົາຄືນກະບໍ່ຄືນ*

*ຮູ້ຈັກທ້ອນເງິນຝາກມາ ລ້ຽງນ້ອງຊ່ອຍພໍ່ແຖ ກະແຄນ*

*ເນາະບ້ານເມືອງເນາະ ?*